**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ເລກທີ 189 /ກປຈ

ນະຄອນຫຼວງວຽງຈັນ, ວັນທີ 24 ກຸມພາ 2026

## ໜັງສືແຈ້ງເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ພາຫະນະ ຂໍເຊີນ ບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສຳລັບການສະໜອງພາຫະນະ ປະເພດລົດໃຫຍ່ຕາມເອກະສານຢັ້ງຢືນຂອງກົມພາສີ ຈຳນວນທັງໝົດ 43 ຄັນ ປະກອບມີ: ປະເພດ ລົດຈິບ ເກຍໂອໂຕ (Full option) ຈຳນວນ 4 ຄັນ ແລະ ລົດກະບະ ຂັບເຄື່ອນ 4 ລໍ້ (Full option) ເກຍໂອໂຕ ຈຳນວນ 39 ຄັນ. ເພື່ອປະກອບເປັນລົດຮັບໃຊ້ວຽກງານວິຊາສະເພາະຂອງກົມ ພາສີ ກະຊວງການເງິນ. ກຳນົດເວລາມອບ-ຮັບລົດພາຍໃນ 60 ວັນ.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ກົດໝາຍວ່າດ້ວຍການ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳ ແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນ ການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ເບີໂທຕິດຕໍ່ 02028999891, 020 22042440 ໃນ ເວລາລັດຖະການ.
4. ເອກະສານປະມູນເລີ່ມຂາຍແຕ່ 24 ກຸມພາ 2026 ຫາ 30 ມີນາ 2026. ໃນລາຄາ 500,000 ກີບ/ຄັນ, ວິທີການຊຳລະເປັນເງິນສົດ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ.
5. ຊອງປະມູນຕ້ອງສົ່ງກອ່ນເວລາ 09:00 ໂມງ ຂອງວັນທີ 30 ມີນາ 2026. ຊອງປະມູນທຸກໆຊອງຈະ ໄດ້ເປີດໃນວັນທີ 30 ມີນາ 2026 ເວລາ 09:00ໂມງ ທີ່ຫ້ອງປະຊຸມກົມປະເມີນຜົນ ແລະ ການຈັດ ຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ4 ( ຕຶກແຄມຂອງ ) ໂດຍຊອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ.
6. ທຸກຊອງປະມູນຕ້ອງມີໜັງສືຄ້ຳປະກັນການປະມູນຈາກທະນາຄານ, ແຊັກ (VISA) ຫຼື ເງິນສົດ ຊຶ່ງມີ ມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2 %ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

ຫົວໜ້າກົມ

ສົມບູນ ແກ່ນປະເສີດ

Somboun KENPASEUTH

สแกนด้วย CamScanner